ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0144 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 26 FEB 2021

# ຂໍ້ຕົກລົງ
## ວ່າດ້ວຍ ທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008;
- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 0695/ກຂອ.ສລ, ລົງວັນທີ 23 ກຸມພາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ ເພື່ອເຮັດໃຫ້ທຸລະກິດດັ່ງກ່າວ ດຳເນີນຢ່າງຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ພ້ອມດ້ວຍລະບຽບຫຼັກການຂອງພາກພື້ນ ແລະ ສາກົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ**

ທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ແມ່ນ ທຸລະກິດກ່ຽວກັບການຊື້-ຂາຍວັດຖຸມີຄ່າ ໂດຍຊື້ຈາກຕ່າງປະເທດເຂົ້າມາ ຂາຍຍົກ-ຂາຍຍ່ອຍ ຢູ່ພາຍໃນ ສປປ ລາວ ຫຼື ຊື້ຈາກຜູ້ຜະລິດ ຢູ່ ສປປ ລາວ ເພື່ອສົ່ງອອກໄປຂາຍຢູ່ຕ່າງປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ວັດຖຸມີຄ່າ** ໝາຍເຖິງ ວັດຖຸ ແລະ ສິ່ງຂອງທີ່ມີຄ່າ ເຊັ່ນ: ເງິນ ແລະ ຄຳ ທີ່ເປັນຮູບປະພັນ, ເພັດ, ໄຂ່ມຸກ, ແກ້ວປະເສີດ, ຄຳຂາວ ແລະ ເຄື່ອງອື່ນໆ ທີ່ເຮັດດ້ວຍໂລຫະປະເສີດ ຕາມລະຫັດອັດຕາພາສີ (HS Code) 7102, 7103, 7104, 7110, 7111, 7113, 7114, 7115 ແລະ 7116 ຍົກເວັ້ນ ຄຳແທ່ງ, ຄຳເມັດ, ເງິນແທ່ງ ແລະ ເງິນເມັດ ທີ່ບໍ່ເປັນຮູບປະພັນ ທີ່ ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ ແລະ ຜະລິດຕະພັນຈາກແຮ່ທາດ ທີ່ ກະຊວງພະລັງງານ ແລະ ບໍ່ແຮ່ ຄຸ້ມຄອງ;

2. **ໃບອະນຸຍາດດຳເນີນທຸລະກິດ** ໝາຍເຖິງ ໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ຊຶ່ງເປັນເອກະສານຢັ້ງຢືນສິດ ແລະ ພັນທະໃນການດຳເນີນທຸລະກິດນຳເຂົ້າວັດຖຸມີຄ່າເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກວັດຖຸມີຄ່າ;

3. **ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ** ໝາຍເຖິງ ບຸກຄົນຜູ້ເປັນເຈົ້າຂອງຜົນປະໂຫຍດສຸດທ້າຍທີ່ແທ້ຈິງ ຈາກການເຄື່ອນໄຫວທຸລະກິດ, ກິດຈະກຳ ຫຼື ທຸລະກຳໃດໜຶ່ງ ລວມທັງຜູ້ມີອຳນາດໃນການຄວບຄຸມນິຕິບຸກຄົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບທຸລະກິດການນຳເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ. ສຳລັບທຸລະກິດການຊື້-ຂາຍວັດຖຸມີຄ່າພາຍໃນປະເທດ ແມ່ນຈະມີລະບຽບການຄຸ້ມຄອງຕ່າງຫາກ.

## ໝວດທີ 2
## ການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ

**ມາດຕາ 5 ເງື່ອນໄຂການດຳເນີນທຸລະກິດ ການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ**

ການດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນທີ່ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ;

2. ມີໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ;

3. ມີທຶນສະໜອງແກ່ການດຳເນີນທຸລະກິດ ໂດຍມີແຫຼ່ງທີ່ມາຢ່າງຈະແຈ້ງ ແລະ ຕ້ອງມີເງິນຝາກຢູ່ໃນບັນຊີຂອງຫົວໜ່ວຍທຸລະກິດ ຢ່າງໜ້ອຍ 30% ຂອງທຶນຈົດທະບຽນ;

4. ຜູ້ດຳເນີນທຸລະກິດ ແລະ ຂາຮຸ້ນ ຕ້ອງມີປະຫວັດຈະແຈ້ງ ບໍ່ເຄີຍຖືກສານຕັດສິນລົງໂທດກ່ຽວກັບການກະທຳຜິດຄົ້ນ ຕາມທີ່ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.



ໜ

**ມາດຕາ 6 ການປະກອບເອກະສານເພື່ອຂໍໃບອະນຸຍາດດຳເນີນທຸລະກິດ**

ການສະເໜີຂໍໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ແມ່ນໃຫ້ປະກອບເອກະສານ ສະເໜີຕໍ່ກົມການນຳເຂົ້າ ແລະ ສົ່ງອອກ ດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມ ທີ່ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;

2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາຊຸດຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;

3. ເອກະສານລາຍງານການເຄື່ອນໄຫວບັນຊີທາງການເງິນ ຂອງຜູ້ດຳເນີນທຸລະກິດ ແລະ ຂາຮຸ້ນ ໄລຍະເກົ້າສິບ ວັນ ຍ້ອນຫຼັງ ຈາກທະນາຄານທຸລະກິດ ແລະ ໜັງສືຢັ້ງຢືນການເງິນຢູ່ທະນາຄານ ທີ່ສ້າງຕັ້ງຢູ່ ສປປ ລາວ.

4. ໃບແຈ້ງໂທດຂອງຜູ້ດຳເນີນທຸລະກິດ ແລະ ຂາຮຸ້ນ ຕາມເງື່ອນໄຂທີ່ກຳນົດໃນຂໍ້ 4 ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ກົມການນຳເຂົ້າ ແລະ ສົ່ງອອກ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນ ສາມ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ.

ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນໃຫ້ແຈ້ງຜູ້ສະເໜີທັນທີ ເພື່ອນຳໄປປັບປຸງແກ້ໄຂ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດດັ່ງກ່າວ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນພາຍໃນ ສອງ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ.

**ມາດຕາ 8 ອາຍຸ, ການຕໍ່ອາຍຸ ແລະ ການດັດແກ້ເນື້ອໃນ ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ມີອາຍຸການນຳໃຊ້ ຫ້າ ປີ ແລະ ສາມາດຕໍ່ໄດ້ ໂດຍປະກອບເອກະສານສະເໜີຂໍຕໍ່ອາຍຸ ກ່ອນວັນໝົດອາຍຸ ສາມສິບ ວັນ.

ການຕໍ່ອາຍຸ ແລະ ການດັດແກ້ເນື້ອໃນ ໃບອະນຸຍາດດຳເນີນທຸລະກິດ ໃຫ້ປະກອບເອກະສານ ສະເໜີຕໍ່ກົມການນຳເຂົ້າ ແລະ ສົ່ງອອກ ດັ່ງນີ້:

1. ຄຳຮ້ອງຕາມແບບພິມ ທີ່ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;

2. ໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ສະບັບຕົ້ນ.

**ມາດຕາ 9 ການຍົກເລີກ ຫຼື ລຶບລ້າງໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ຈະຖືກຍົກເລີກ ຫຼື ລຶບລ້າງ ໃນກໍລະນີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດບໍ່ປະຕິບັດພັນທະຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

2. ຜູ້ດຳເນີນທຸລະກິດສະເໜີຢຸດເຊົາການດຳເນີນທຸລະກິດດ້ວຍຄວາມສະໝັກໃຈ;

3. ມີຄຳຕັດສິນຈາກສານປະຊາຊົນ ໃຫ້ລົ້ມລະລາຍ ຫຼື ໃຫ້ຢຸດເຊົາການດຳເນີນທຸລະກິດ ຕາມລະບຽບກົດໝາຍ.

### ມາດຕາ 10 ການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ

ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າແລ້ວ, ຜູ້ດຳເນີນທຸລະກິດສາມາດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໂດຍດຳເນີນການປະກອບເອກະສານຕາມລະບຽບການ, ຂັ້ນຕອນການແຈ້ງພາສີຢູ່ດ່ານໄດ້ເລີຍ.

## ໝວດທີ 3
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ

### ມາດຕາ 11 ສິດຂອງຜູ້ດຳເນີນທຸລະກິດ ການນຳເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ມີສິດ ດັ່ງນີ້:

1. ນຳເຂົ້າວັດຖຸມີຄ່າເພື່ອຈຳໜ່າຍ ແລະ ສົ່ງອອກວັດຖຸມີຄ່າ ຕາມທີ່ລະບຸໄວ້ໃນໃບອະນຸຍາດດຳເນີນທຸລະກິດ;
2. ສະເໜີຂໍຕໍ່, ດັດແກ້ຂໍ້ມູນ ຫຼື ຍົກເລີກໃບອະນຸຍາດດຳເນີນທຸລະກິດ;
3. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

### ມາດຕາ 12 ພັນທະຂອງຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກ

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ມີພັນທະ ດັ່ງນີ້:

1. ແຈ້ງເສຍພາສີ-ອາກອນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. ສະໜອງແຜນດຳເນີນທຸລະກິດປະຈຳປີ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນທີອອກໃບອະນຸຍາດດຳເນີນທຸລະກິດ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
3. ສ້າງຂໍ້ກຳນົດພາຍໃນ ກ່ຽວກັບ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ສະຫຼຸບ ແລະ ລາຍງານ ສະຖິຕິການນຳເຂົ້າ ແລະ ສົ່ງອອກຕົວຈິງ ສົ່ງໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. ບົດສະຫຼຸບປະຈຳທຸກເດືອນ ແມ່ນໃຫ້ສົ່ງກ່ອນວັນທີ ສາມສິບ ພຶດສະພາ, ສ່ວນບົດສະຫຼຸບປະຈຳປີແມ່ນໃຫ້ສົ່ງກ່ອນວັນທີ ສາມສິບ ທັນວາ ຂອງທຸກໆປີ. ກົມການນຳເຂົ້າ ແລະ ສົ່ງອອກ ຈະສ້າງແບບຟອມ ໃຫ້ບັນດາຫົວໜ່ວຍທຸລະກິດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ສັງລວມ ແລະ ລາຍງານເປັນເອກະພາບໃນຂອບເຂດທົ່ວປະເທດ.
5. ເກັບຮັກສາສຳນວນເອກະສານຄົບຊຸດ ກ່ຽວກັບ ການອະນຸຍາດດຳເນີນທຸລະກິດ ແລະ ການນຳເຂົ້າ ແລະ ສົ່ງອອກຕົວຈິງ ເຊັ່ນ: ຄຳຮ້ອງ, ໃບທະບຽນວິສາຫະກິດ, ເອກະສານລາຍງານການເຄື່ອນໄຫວບັນຊີທາງການເງິນ, ສັນຍາຊື້-ຂາຍ ກັບ ຜູ້ຊື້ ຫຼື ຜູ້ຂາຍ ໃນກໍລະນີນຳເຂົ້າ ຫຼື ສົ່ງອອກເພື່ອຈຳໜ່າຍ, ໃບສັ່ງສ້ອມແປງຈາກລູກຄ້າ ໃນກໍລະນີນຳເຂົ້າ ຫຼື ສົ່ງອອກເພື່ອສ້ອມແປງ, ເອກະສານເຊີນເຂົ້າຮ່ວມງານວາງສະແດງ ຫຼື ເອກະສານທີ່ກ່ຽວຂ້ອງ ໃນກໍລະນີນຳເຂົ້າ ຫຼື ສົ່ງອອກເພື່ອເຂົ້າຮ່ວມງານວາງສະແດງ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ ໃນໄລຍະເວລາ ຫ້າ ປີ;
6. ເກັບກຳສັງລວມ ແລະ ສະໜອງຂໍ້ມູນລະອຽດຂອງລູກຄ້າຕົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ແລະ ການເຮັດທຸລະກຳຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ



ພ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ກົມການນໍາເຂົ້າ ແລະ ສົ່ງອອກ ເປັນລາຍເດືອນ, ສາມເດືອນ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ;

7. ແຈ້ງໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນ ຊາບກ່ອນລ່ວງໜ້າ ສິບຫ້າ ວັນ ລັດຖະການ ໃນກໍລະນີທີ່ມີການປ່ຽນແປງຂໍ້ມູນຂອງຜູ້ດໍາເນີນທຸລະກິດ ແລະ ຂາຮຸ້ນ ລວມທັງຜູ້ຮັບຜົນປະໂຫຍດທີ່ແທ້ຈິງ, ມີການໂຈະ ຫຼື ຍົກເລີກກິດຈະການ;

8. ໃຫ້ການຮ່ວມມືໃນການຕິດຕາມກວດກາ ແລະ ສະໜອງຂໍ້ມູນ ໃຫ້ກົມການນໍາເຂົ້າ ແລະ ສົ່ງອອກ ແລະ ຂະແໜງການທີ່ກ່ຽວຂ້ອງອື່ນ ຕາມການສະເໜີ ແລະ ຢ່າງບໍ່ມີເງື່ອນໄຂ;

9. ປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຄຸ້ມຄອງທຸລະກິດການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ

**ມາດຕາ 13 ການຄຸ້ມຄອງທຸລະກິດການນໍາເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ**

ການຄຸ້ມຄອງທຸລະກິດການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການນໍາເຂົ້າ ແລະ ສົ່ງອອກ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກົມການນໍາເຂົ້າ ແລະ ສົ່ງອອກ**

ກົມການນໍາເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງທຸລະກິດການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ ໂດຍສ້າງ ແລະ ປັບປຸງໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫຼື ສະພາບການຂະຫຍາຍຕົວທາງເສດຖະກິດ ຂອງ ສປປ ລາວ;

2. ເຜີຍແຜ່ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;

3. ກວດກາຄວາມຖືກຕ້ອງ ແລະ ເກັບຮັກສາສໍານວນເອກະສານຂອງທຸລະກິດການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໃນໄລຍະ ຫ້າ ປີ ພ້ອມທັງ ກວດກາທຸກການປ່ຽນແປງ ທີ່ທຸລະກິດນໍາເຂົ້າ ແລະ ສົ່ງອອກ ໄດ້ແຈ້ງ ເພື່ອຮັບປະກັນຄວາມຖືກຕ້ອງຄົບຖ້ວນຕາມລະບຽບການກໍານົດ;

4. ຄົ້ນຄວ້າພິຈາລະນາ ອອກ, ໂຈະ, ຖອນ, ລຶບລ້າງ, ອອກຄືນໃໝ່ ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ;

5. ປະສານສົມທົບກັບ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໃນຂອບເຂດທົ່ວປະເທດ;

6. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການເຄື່ອນໄຫວຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານກ່ຽວກັບການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດ ແຂວງ, ນະຄອນຫຼວງ ຂອງຕົນ;

2. ຊຸກຍູ້ ແລະ ຕິດຕາມ ການເຄື່ອນໄຫວຂອງທຸລະກິດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ແຂວງ, ນະຄອນຫຼວງ ໃນການປະຕິບັດພັນທະຂອງຕົນ ແລະ ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ;

3. ສະເໜີກົມການນຳເຂົ້າ ແລະ ສົ່ງອອກ ພິຈາລະນາ ສັ່ງໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດໃນກໍລະນີຫົວໜ່ວຍທຸລະກິດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ ແຂວງ, ນະຄອນຫຼວງ ຫາກບໍ່ປະຕິບັດຕາມສິດ ແລະ ພັນທະຂອງຕົນທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຫຼື ລະເມີດຕໍ່ກົດໝາຍ ແລະ ລະບຽບການ ອື່ນທີ່ກ່ຽວຂ້ອງ;

4. ສະຫຼຸບ, ລາຍງານ ວຽກງານການຄຸ້ມຄອງການເຄື່ອນໄຫວຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ ແຂວງ, ນະຄອນຫຼວງ ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນຳ ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ, ນະຄອນຂອງຕົນ;

2. ຊຸກຍູ້ ແລະ ຕິດຕາມ ການເຄື່ອນໄຫວຂອງທຸລະກິດນຳເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ເມືອງ, ນະຄອນ ຂອງຕົນ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ສະຫຼຸບ, ລາຍງານ ວຽກງານການຄຸ້ມຄອງການເຄື່ອນໄຫວຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ທີ່ສ້າງຕັ້ງຢູ່ ເມືອງ, ນະຄອນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງຂອງຕົນ ຢ່າງເປັນປົກກະຕິ.

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

ມາດຕາ 18 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວຕັກເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

ມາດຕາ 19 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ.

ມາດຕາ 20 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ:.............................................                                                   ເລກທີ:................../.............

# ໃບຄໍາຮ້ອງ

ຮຽນ : ທ່ານ ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ.

ເລື່ອງ : ຂໍໃບອະນຸຍາດດໍາເນີນທຸລະກິດ, ຂໍດັດແກ້ ແລະ/ຫຼື ຂໍຕໍ່ອາຍຸ ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ

- ອີງຕາມຄໍາແນະນໍາກ່ຽວກັບການອອກອະນຸຍາດດໍາເນີນທຸລະກິດໃນກິດຈະການອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0045/ອຄ.ກທຄວ,ລົງວັນທີ 18 ມັງກອນ 2019;
- ອີງຕາມໃບທະບຽນວິສາຫະກິດ ສະບັບເລກທີ......................., ລົງວັນທີ.......................

ຂ້າພະເຈົ້າ ຊື່ ແລະ ນາມສະກຸນ:.........................................................., ສັນຊາດ:..................., ປະຈຸບັນຢູ່ບ້ານ:........................., ເມືອງ:......................., ແຂວງ:........................., ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ເລກທີ:...................., ລົງວັນທີ:........................., ໝົດອາຍຸວັນທີ:......................, ໂທລະສັບ:........................,ແຟັກ:.........................

ມີຈຸດປະສົງ: ເພື່ອຂໍໃບອະນຸຍາດດໍາເນີນທຸລະກິດ, ຂໍດັດແກ້ ແລະ/ຫຼື ຂໍຕໍ່ອາຍຸ ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ຕາມປະເພດທຸລະກິດ ດັ່ງລຸ່ມນີ້:

**ກ. ຂໍໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກ ເພື່ອ:**

☐ ນໍາເຂົ້າເພື່ອຈໍາໜ່າຍພາຍໃນ:..........................................................................................................

☐ ສົ່ງອອກ:.......................................................................................................................................

**ຂ. ຂໍດັດແກ້ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກ ຍ້ອນ:**

☐ ເພີ່ມທຶນ:.....................................................................................................................................

☐ ປ່ຽນຊື່ຜູ້ອໍານວຍການ ຫຼື ຜູ້ຈັດການ..........................................................................................

☐ ໃບອະນຸຍາດຕົກເຮ່ຍເສຍຫາຍ.........................................................................................................

**ຄ. ຂໍຕໍ່ອາຍຸໃບອະນຸຍາດດໍາເນີນທຸລະກິດ ☐**

ຂ້າພະເຈົ້າ, ຂໍຢັ້ງຢືນວ່າທຸກຂໍ້ຄວາມທີ່ກ່າວມາຂ້າງເທິງນັ້ນ ແລະ ເອກະສານທີ່ຄັດຕິດມາພ້ອມນີ້ ແມ່ນຖືກຕ້ອງຕາມຄວາມເປັນຈິງທຸກປະການ. ຖ້າຫາກບໍ່ຖືກຕ້ອງຕາມຄວາມເປັນຈິງ, ຂ້າພະເຈົ້າຂໍຮັບຜິດຊອບຕໍ່ໜ້າກົດໝາຍ ຂອງ ສປປ ລາວ ທຸກປະການ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງ ທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ທີ່.........................., ລົງວັນທີ............................

ລາຍເຊັນ

ຜູ້ອໍານວຍການບໍລິສັດ/ຜູ້ຈັດການ

ຄັດຕິດມາພ້ອມນີ້ :

- ໃບມອບສິດ ແລະ ສໍາເນົາບັດປະຈໍາຕົວ

(ກໍລະນີຜູ້ທີ່ມາແລ່ນເອກະສານບໍ່ແມ່ນເຈົ້າຂອງວິສາຫະກິດ)

- ຮູບຖ່າຍບໍ່ເກີນ 03 ເດືອນ, ຂະໜາດ 3x4 ຈໍານວນ 03 ໃບ

ເອກະສານປະກອບຕາມມາດຕາ 7 ແລະ ມາດຕາ 8 ຂອງຂໍ້ຕົກລົງ

| ລດ | ເນື້ອໃນ | ຄົບ ຖ້ວນ | ຖືກ ຕ້ອງ | ເຫດຜົນ |
|---|---|---|---|---|
| ກ | **ຂໍໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ** | | | |
| 1 | ໃບຄຳຮ້ອງ (ຕາມແບບພິມ 01) | | | |
| 2 | ສຳເນົາຕົ້ນສະບັບໃບທະບຽນວິສາຫະກິດ ແລະ ຊຸດສຳເນົາຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ (ຕົ້ນສະບັບສຳ ລັບວິສາຫະກິດຈົດທະບຽນໃໝ່); | | | |
| 3 | ລາຍງານການເຄື່ອນໄຫວບັນຊີທາງການເງິນໄລຍະ 90 ວັນ ຍ້ອນຫຼັງ ແລະ ມີເງິນຢູ່ໃນບັນຊີຢ່າງໜ້ອຍ 30% ຂອງທຶນຈົດທະບຽນ ທີ່ຈະນຳມາສ້າງຕັ້ງທຸລະກິດວັດຖຸມີຄ່າ ໂດຍຢັ້ງຢືນຈາກທະນາຄານທຸລະກິດ ຢູ່ ສປປ ລາວ | | | |
| 4 | ໃບແຈ້ງໂທດ | | | |
| ຂ | **ຂໍດັດແກ້ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ** | | | |
| 1 | ໃບຄຳຮ້ອງ (ຕາມແບບພິມ 01) | | | |
| 2 | ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ (ຕົ້ນສະບັບ) | | | |
| 3 | ໃບທະບຽນວິສາຫະກິດ (ຕົ້ນສະບັບ) ກໍລະນີປ່ຽນແປງໃໝ່ | | | |

| **ຜູ້ຍື່ນເອກະສານ** | **ຜູ້ກວດກາ ແລະ ຮັບເອກະສານ** |
|---|---|
| | **ຄຳເຫັນຂອງຫົວໜ້າພະແນກ** |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

# ຮ່າງ

# ແຜນການດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ ໃນໄລຍະ 2 ປີທຳອິດ

## I. ພາກສະເໜີ

ໃຫ້ເວົ້າພາບລວມ ກ່ຽວກັບສະພາບການນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍ ວັດຖຸມີຄ່າ ໃນ ສປປ ລາວ ໝາຍເຖິງສະເໜີສະພາບຄວາມຕ້ອງການ ແລະ ການສະໜອງຂອງຕະຫຼາດພາຍໃນ ຫຼື ຕ່າງປະເທດ ເປັນຄືແນວໃດ?

## II. ສະພາບໂດຍລວມຂອງບໍລິສັດ

ຍົກໃຫ້ເຫັນເຖິງປະຫວັດຄວາມເປັນມາການສ້າງຕັ້ງບໍລິສັດ, ຊື່ບໍລິສັດ, ທີ່ຕັ້ງສຳນັກງານ (ແຕ້ມແຜນວາດສະຖານທີ່ຢ່າງຊັດເຈນ), ຈຸດປະສົງ ແລະ ເປົ້າໝາຍໃນການສ້າງຕັ້ງທຸລະກິດດັ່ງກ່າວ ພ້ອມທັງສະແດງວິໄສທັດ ແລະ ພາລະບົດບາດຂອງບໍລິສັດ ເພື່ອຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມຄືແນວໃດ?

## III. ສະພາບການດຳເນີນທຸລະກິດຂອງບໍລິສັດ

ສະເໜີຂອບເຂດການເຄື່ອນໄຫວ, ຜະລິດຕະພັນຂອງບໍລິສັດ, ອະທິບາຍແຫຼ່ງນຳເຂົ້າ ຫຼື ສົ່ງອອກ ວັດຖຸມີຄ່າ, ວິທີການນຳເຂົ້າ ຫຼື ສົ່ງອອກ, ຮູບແບບການຂົນສົ່ງ, ການນຳໃຊ້ທຶນຈົດທະບຽນ ເຂົ້າໃນການດຳເນີນທຸລະກິດ.

## IV. ແຜນຍຸດທະສາດຂອງບໍລິສັດໃນການລົງທຶນ ແລະ ດຳເນີນທຸລະກິດ

ລູກຄ້າເປົ້າໝາຍ, ຕະຫຼາດເປົ້າໝາຍຢູ່ໃສ, ການຕະຫຼາດ-ການສົ່ງເສີມການຂາຍ ແລະ ການຈັດຈຳໜ່າຍ, ແຜນການນຳເຂົ້າ ແລະ ສົ່ງອອກ ໃນໄລຍະ 2 ປີ.

## V. ປັດໃຈທີ່ເຮັດໃຫ້ປະສົບຜົນສຳເລັດ

ສະເໜີ ປັດໃຈພາຍໃນ ແລະ ພາຍນອກທີ່ຈະສົ່ງຜົນໃຫ້ທຸລະກິດປະສົບຜົນສຳເລັດ.

## VI. ສະຫຼຸບ

ຈາກຂໍ້ມູນຂ້າງເທິງນັ້ນ ໃຫ້ສັງລວມໂດຍຫຍໍ້ ໂດຍສະເພາະດ້ານດີທີ່ຈະປະກອບສ່ວນໃຫ້ແກ່ເສດຖະກິດ-ສັງຄົມມີຄືແນວໃດ ພ້ອມທັງປະຕິຍານຕົນຕໍ່ກັບການດຳເນີນທຸລະກິດຈະດຳເນີນທຸລະກິດບົນພື້ນຖານລະບຽບ ແລະ ກົດໝາຍ ທີ່ ສປປ ລາວ ວາງອອກ ຢ່າງເຂັ້ມງວດ.

ນະຄອນຫຼວງວຽງຈັນ, ວັນທີ........./........./...........

**ຜູ້ອຳນວຍການ/ຜູ້ຈັດການ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ ເລກທີ......................./ກຂອ

ນະຄອນຫຼວງວຽງຈັນ, ລົງວັນທີ............................

# ໃບອະນຸຍາດດຳເນີນທຸລະກິດ

ຮູບ 3x4

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍຮັບຮອງກິດຈະການອຸດສາຫະກຳ ແລະ ການຄ້າ ທີ່ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 0044/ອຄ.ກທຄວ, ລົງວັນທີ 18 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍທຸລະກິດນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ສະບັບເລກທີ ....../ກຂອ, ລົງວັນທີ ....................
- ອີງຕາມ ຄຳແນະນຳ ກ່ຽວກັບການອອກໃບອະນຸຍາດດຳເນີນທຸລະກິດ ໃນກິດຈະການອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0045/ອຄ.ກທຄວ, ວັນທີ 18 ມັງກອນ 2019;
- ອີງຕາມ ໃບຄຳຮ້ອງ ຂໍໃບອະນຸຍາດດຳເນີນທຸລະກິດ ຫຼື ຂໍດັດແກ້ ຂອງບໍລິສັດ............., ເລກທີ..........., ລົງວັນທີ..................

## ກົມການນຳເຂົ້າ ແລະ ສົ່ງອອກ

## ອອກອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ ໃຫ້ແກ່ວິສາຫະກິດ:

- ຊື່ວິສາຫະກິດ:
  - ພາສາລາວ.................................................
  - ພາສາຕ່າງປະເທດ.........................................
- ໃບທະບຽນວິສາຫະກິດ, ສະບັບເລກທີ............/..........., ລົງວັນທີ................................................
- ເລກລະຫັດວິສາຫະກິດ..........................., ເລກປະຈຳຕົວຜູ້ເສຍອາກອນ.......................................
- ທີ່ຕັ້ງສຳນັກງານ..........................................................................................................
- ໂທລະສັບ...................................................................................................................
- ປະເພດທຸລະກິດນຳເຂົ້າ...................................................................................................
- ປະເພດທຸລະກິດສົ່ງອອກ..................................................................................................

ໃບອະນຸຍາດດຳເນີນທຸລະກິດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ